ແຂວງຈຳປາສັກ
ພະແນກເຕັກໂນໂລຊີ ແລະ ການສື່ສານ
ເລກທີ.....09.....
ວັນທີ 10...1...2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ..19.../ຈຂ.ຈສ
ແຂວງຈຳປາສັກ, ວັນທີ..06.. ມັງກອນ 2023

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກການຈັດຕັ້ງຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ຄຳສັ່ງຂອງ ຄະນະເລຂາທິການສູນກາງພັກ ສະບັບເລກທີ 190/ຄລສພ, ລົງວັນທີ 29 ກັນຍາ 2021ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ;
- ອີງຕາມ ບົດບັນທຶກກອງປະຊຸມຂອງຄະນະປັບປຸງກົງຈັກການຈັດຕັ້ງພັກ ແລະ ລັດຂັ້ນແຂວງ ໃນຄັ້ງວັນທີ 28 ມີນາ 2022;
- ອີງຕາມ ບົດລາຍງານຂອງພະແນກພາຍໃນແຂວງ ສະບັບເລກທີ 001/ພນຂ, ລົງວັນທີ 3 ມັງກອນ 2023.

## ເຈົ້າແຂວງຈຳປາສັກ ຕົກລົງ:

ມາດຕາ 1 ອະນຸມັດຮັບຮອງໂຄງປະກອບກົງຈັກການຈັດຕັ້ງຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງຈຳປາສັກ ຈາກ 4 ຂະແໜງ ເປັນ 5 ຂະແໜງ, ລະອຽດດັ່ງນີ້:

1. ຂະແໜງ ບໍລິຫານ, ຈັດຕັ້ງ ແລະ ກວດກາ;
2. ຂະແໜງ ໄປສະນີ ແລະ ການສື່ສານ;
3. ຂະແໜງ ບໍລິຫານລັດດີຈີຕ້ອນ;
4. ຂະແໜງ ຄວາມປອດໄພໄຊເບີ ( ສ້າງຕັ້ງໃໝ່);
5. ຂະແໜງ ເຕັກໂນໂລຊີ ແລະ ນະວັດຕະກຳ.

ມາດຕາ 2 ບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ຂັ້ນເມືອງ ແລະ ພະແນກການທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ, ມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ປະສານສົມທົບກັບ ຄະນະປັບປຸງກົງຈັກການຈັດຕັ້ງພັກ-ລັດຂັ້ນແຂວງ ຈັດພິທີປະກາດຢ່າງເປັນທາງການ.

ມາດຕາ 3 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 421/ຈຂ.ຈສ, ລົງວັນທີ 17 ພຶດສະພາ 2022 ວ່າດ້ວຍການຮັບຮອງໂຄງປະກອບກົງຈັກການຈັດຕັ້ງຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຈຳປາສັກ.

ຮອງເຈົ້າແຂວງ

ສົມບູນ ເຮືອງວົງສາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ 20 /ຈຂ.ຈສ

ແຂວງຈຳປາສັກ, ວັນທີ 06 ມັງກອນ 2023

# ຂໍ້ຕົກລົງ
## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ ຈຳປາສັກ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ, ສະບັບເລກທີ 732/ກຕສ, ລົງວັນທີ 28 ກຸມພາ 2022;
- ອີງຕາມ ບົດລາຍງານຂອງພະແນກພາຍໃນແຂວງ ຈຳປາສັກ ສະບັບເລກທີ 001/ພນຂ, ລົງວັນທີ 3 ມັງກອນ 2022.

## ເຈົ້າແຂວງຈຳປາສັກ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຂອງ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ ຂຽນເປັນຕົວອັກສອນຫຍໍ້ " ພຕສ.ຈສ " ແລະ ຂຽນເປັນພາສາອັງກິດວ່າ " Department of Technology and Communications of Champasack Province " ຂຽນເປັນຕົວອັກສອນຫຍໍ້ " DTC.CH " ແມ່ນກົງຈັກໜຶ່ງຂອງອົງການປົກຄອງແຂວງຈຳປາສັກ, ມີພາລະບົດບາດເປັນເສນາທິການໃຫ້ແກ່ເຈົ້າແຂວງ ແລະ ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ

ໃນການຄຸ້ມຄອງ ແລະ ພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ຢູ່ແຂວງຕົນ ພາຍໃຕ້ການຊີ້ນໍາ-ນໍາພາ ແລະ ຄຸ້ມຄອງດ້ານຊີວິດການເມືອງ ຂອງອົງການປົກຄອງແຂວງ ແລະ ການຊີ້ນໍາ-ນໍາພາ ແລະ ກວດກາດ້ານເຕັກນິກວິຊາການຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງລັດ, ລະບຽບການ ຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ລະບຽບການຂອງແຂວງຈຳປາສັກ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານ ມາເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
2. ສ້າງແຜນຍຸດທະສາດ, ນະໂຍບາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານຂອງແຂວງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃນແຕ່ລະໄລຍະ ເພື່ອສະເໜີເຈົ້າແຂວງພິຈາລະນາ;
3. ເຜີຍແຜ່ກົດໝາຍ, ລະບຽບການ, ຍຸດທະສາດ, ແຜນພັດທະນາ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານ ໃຫ້ບັນດາພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງ ພ້ອມທັງຊຸກຍູ້, ແນະນຳ ໃນການຈັດຕັ້ງປະຕິບັດ;
4. ຄົ້ນຄວ້າການອອກອະນຸຍາດ, ສືບຕໍ່, ໂຈະ, ຖອນ ແລະ ຍົກເລີກ ໃບອະນຸຍາດດຳເນີນທຸລະກິດດ້ານເຕັກໂນໂລຊີ ແລະ ການສື່ສານ, ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານລະບົບໂຟນີ ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມການມອບໝາຍຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ;
5. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ອອກອະນຸຍາດ ການນຳເຂົ້າ, ສົ່ງອອກ ແລະ ການນຳໃຊ້ອຸປະກອນລະບົບເຕັກໂນໂລຊີ ແລະ ການສື່ສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມການມອບໝາຍຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ;
6. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກັກປົດ ອຸປະກອນ-ຜະລິດຕະພັນດ້ານເຕັກໂນໂລຊີ ແລະ ການສື່ສານ ທີ່ນຳເຂົ້າ, ຈຳໜ່າຍ, ນຳໃຊ້ ແລະ ໃຫ້ບໍລິການ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຢູ່ພາຍໃນຂອບເຂດແຂວງຈຳປາສັກ;
7. ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ສົ່ງເສີມ ໃນການນຳເຂົ້າ, ສົ່ງອອກ ສັນຍານອິນເຕີເນັດ, ສັນຍານໂທລະສັບ, ສັນຍານຂໍ້ຄວາມສັ້ນ ແລະ ຈຸດເຊື່ອມຕໍ່ສາຍສົ່ງຕາມຊາຍແດນ ເຂົ້າ-ອອກຕ່າງປະເທດ ຕ້ອງປະຕິບັດຕາມນະໂຍບາຍລວມສູນການສື່ສານຜ່ານປະຕູດຽວ ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ກຳນົດໄວ້ໃນແຕ່ລະໄລຍະ;
8. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມປອດໄພໄຊເບີ ທັງຊຸກຍູ້ການນຳໃຊ້ລະບົບອິນເຕີເນັດໃຫ້ຖືກຕ້ອງ ແລະ ມີຄວາມລະຫງັບປອດໄພ ແລະ ຮັບແຈ້ງເຫດສຸກເສີນທາງຄອມພິວເຕີ

ຈາກພາກສ່ວນຕ່າງໆພາຍໃນແຂວງ ເພື່ອລາຍງານຕໍ່ແຂວງ ແລະ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຮັບຊາບ ໃນແຕ່ລະໄລຍະ;

9. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາແນະນຳ ແລະ ສົ່ງເສີມຜູ້ໃຫ້ບໍລິການ, ຄຸ້ມຄອງຜູ້ບໍລິໂພກ, ການຮັບຄຳຮ້ອງທຸກ, ການກ່າວເຕືອນ, ການເຮັດບົດບັນທຶກ, ການນຳໃຊ້ມາດຕະການ ແລະ ການແກ້ໄຂຂໍ້ຂັດແຍ່ງໃນການດຳເນີນທຸລະກິດ ດ້ານເຕັກໂນໂລຊີ ແລະ ການສື່ສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

10. ຄຸ້ມຄອງ ແລະ ຕິດຕາມ ການນຳໃຊ້ ລະບົບບໍລິຫານ ແລະ ບໍລິການຂອງລັດ ເພື່ອຫັນເປັນທັນສະໄໝເທື່ອລະກ້າວ ເປັນຕົ້ນ ລະບົບເຄືອຂ່າຍພາກລັດ, ກອງປະຊຸມທາງໄກ E-Office, Email, G-Chat, G-Share, G-Web ແລະ ອື່ນໆ;

11. ຊຸກຍູ້, ສົ່ງເສີມ, ເຜີຍແຜ່ການໃຫ້ບໍລິການ, ສະໜອງຂໍ້ມູນຂ່າວສານ ແລະ ນຳພາອົງການຈັດຕັ້ງລັດ-ເອກະຊົນ ແລະ ປະຊາຊົນ ໃຫ້ຮູ້ນຳໃຊ້ເຕັກໂນໂລຊີ ແລະ ການສື່ສານ ເຂົ້າໃນວຽກງານ ແລະ ການດຳລົງຊີວິດ ຢ່າງທົ່ວເຖິງ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ພາຍໃນແຂວງ;

12. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການວາງແຜນ, ຈັດສັນ, ພັດທະນາ, ປັບປຸງ, ຍົກລະດັບ, ຂະຫຍາຍ ແລະ ເປັນເຈົ້າການຄຸ້ມຄອງໂຄງລ່າງດ້ານເຕັກໂນໂລຊີ ແລະ ການສື່ສານພາຍໃນແຂວງ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

13. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ, ຄົ້ນຄວ້າພັດທະນາ, ທົດລອງ, ເລືອກເຟັ້ນ ແລະ ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອສ້າງເປັນໂຄງການຕົວແບບຂອງແຂວງ;

14. ຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ກວດກາ ວຽກງານໄປສະນີ ແລະ ການສື່ສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

15. ປະສານສົມທົບກັບບັນດາ ກົມ/ທຽບເທົ່າ ທີ່ກ່ຽວຂ້ອງຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ລົງຕິດຕາມ, ກວດກາ ການອະນຸຍາດ ແລະ ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານລະບົບໂຟນີ, ເຄື່ອງບິນບໍ່ມີຄົນຂັບ (Drone ) ແລະ ການລັກລອບນຳໃຊ້ສັນຍານໂທລະຄົມມະນາຄົມ ແລະ ອິນເຕີເນັດຈາກຕ່າງປະເທດ ທີ່ຜິດກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ແຕ່ລະໄລຍະ;

16. ສັງລວມ ແລະ ແຈ້ງຂໍ້ມູນການອອກອະນຸຍາດຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃຫ້ບັນດາ ກົມ/ທຽບເທົ່າ ທີ່ກ່ຽວຂ້ອງຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ;

17. ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ຫົວໜ່ວຍທຸລະກິດ ທີ່ໃຫ້ບໍລິການດ້ານໄປສະນີ ແລະ ໂທລະຄົມມະນາຄົມ ໃນການຂະຫຍາຍພື້ນຖານໂຄງລ່າງ ແລະ ຕາໜ່າງການບໍລິການ ອອກສູ່ຊົນນະບົດ, ຈຸດສຸມພັດທະນາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງແຂວງ;

18. ຄົ້ນຄວ້າ, ສ້າງແຜນພັດທະນາລະບົບສະຖິຕິ, ເກັບກຳຂໍ້ມູນວຽກງານຂອງຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ໃນແຂວງຕົນ, ລາຍງານ, ສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະໃນລະດັບທ້ອງຖິ່ນຂອງຕົນ ໃນແຕ່ລະໄລຍະ ເພື່ອສະເໜີຕໍ່ການຈັດຕັ້ງທີ່ກ່ຽວຂ້ອງຂອງແຂວງ ທີ່ຕົນຂຶ້ນກັບ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການສະຖິຕິຈາກສູນສະຖິຕິແຫ່ງຊາດປະຈຳແຂວງ ແລະ ສູນກາງ;

19. ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ສະຫຼຸບການເຄື່ອນໄຫວວຽກງານຂອງ ບັນດາບໍລິສັດ ສາຂາຫົວໜ່ວຍທຸລະກິດ ທີ່ໃຫ້ບໍລິການດ້ານ ເຕັກໂນໂລຊີ ແລະ ການສື່ສານ ພ້ອມທັງລາຍງານ ສະພາບການເຄື່ອນໄຫວໃຫ້ ແຂວງ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຮັບຊາບເປັນ ແຕ່ລະໄລຍະ;
20. ຊຸກຍູ້, ແນະນໍາ ແລະ ຄົ້ນຄວ້າປະກອບຄໍາເຫັນ ໃຫ້ແກ່ບັນດາພາກສ່ວນກ່ຽວຂ້ອງ ທີ່ດໍາເນີນ ກິດຈະການຕ່າງໆ ທາງດ້ານເຕັກໂນໂລຊີ ແລະ ການສື່ສານພາຍໃນແຂວງ;
21. ຂຶ້ນແຜນຄຸ້ມຄອງ, ບໍາລຸງ, ກໍ່ສ້າງ, ສັບຊ້ອນ ແລະ ສະເໜີປະຕິບັດນະໂຍບາຍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມລະບຽບກົດໝາຍ;
22. ສະຫຼຸບສັງລວມ, ຕີລາຄາປະເມີນການເຄື່ອນໄຫວວຽກງານປະຈໍາເດືອນ, ງວດ, 6 ເດືອນ ແລະ ປີ ເພື່ອລາຍງານໃຫ້ເຈົ້າແຂວງ ແລະ ລັດຖະມົນຕີກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນປົກກະຕິ;
23. ຄຸ້ມຄອງ ແລະ ກວດກາການນໍາໃຊ້ງົບປະມານຂອງ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈໍາປາສັກ ຕາມການອະນຸມັດຂອງແຂວງຕົນ;
24. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງກະຊວງ ແລະ ອົງການປົກຄອງແຂວງ ຕາມກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ

**ມາດຕາ 4 ຂອບເຂດສິດ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈໍາປາສັກ ມີສິດດັ່ງນີ້:

1. ສະເໜີພາກສ່ວນທີ່ກ່ຽວຂ້ອງໃນການປັບປຸງ, ສ້າງຕັ້ງ ຫຼື ລົບລ້າງກົງຈັກການຈັດຕັ້ງ ແລະ ຕໍາແໜ່ງງານ ທີ່ຂຶ້ນກັບສິດຄຸ້ມຄອງຂອງ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈໍາປາສັກ ໃນເມື່ອ ເຫັນວ່າບໍ່ສອດຄ່ອງ;
2. ສະເໜີປັບປຸງກົດໝາຍ, ລະບຽບການ, ຂໍ້ກໍານົດ, ມະຕິ, ຄໍາສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ອື່ນໆ ທາງດ້ານວຽກງານເຕັກໂນໂລຊີ ແລະ ການສື່ສານ ທີ່ບໍ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຕົວຈິງຂອງແຂວງຈໍາປາສັກ ໃນແຕ່ລະໄລຍະ;
3. ເຈລະຈາ, ພົວພັນ ແລະ ເຊັນສັນຍາ, ອະນຸສັນຍາ ຫຼື ຂໍ້ຜູກພັນອື່ນໆ ກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານດ້ານເຕັກໂນໂລຊີ ແລະ ການສື່ສານ ຢູ່ພາຍໃນຄວາມຮັບຜິດຊອບ ຂອງຕົນ ຕາມການເຫັນດີຂອງແຂວງຈໍາປາສັກ ແລະ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
4. ອອກແຈ້ງການ, ຂໍ້ຕົກລົງ, ຄໍາແນະນໍາ ແລະ ລະບຽບການອື່ນໆ ທີ່ບໍ່ຂັດກັບກົດໝາຍ, ລະບຽບການ ຂອງກະຊວງວາງອອກ, ເຖິງບັນດາຫົວໜ່ວຍທຸລະກິດທີ່ຂຶ້ນກັບ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ແລະ ຂະແໜງການອື່ນອ້ອມຂ້າງແຂວງຈໍາປາສັກ;
5. ອອກ, ສືບຕໍ່, ໂຈະ, ຖອນ, ຍົກເລີກ ໃບອະນຸຍາດ ດໍາເນີນວຽກງານ, ທຸລະກິດ ດ້ານເຕັກໂນໂລຊີ ແລະ ການສື່ສານ, ການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານລະບົບໂຟນີ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນ ຕາມການມອບໝາຍຂອງກະຊວງ ໃນແຕ່ລະໄລຍະ;
6. ເກັບຄ່າທໍານຽມ, ຄ່າບໍລິການ ດ້ານເຕັກໂນໂລຊີ ແລະ ການສື່ສານ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ແລະ ຕາມລະບຽບກົດໝາຍກໍານົດ;

7. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກັກປິດ ອຸປະກອນ-ຜະລິດຕະພັນດ້ານເຕັກໂນໂລຊີ ແລະ ການສື່ສານ ທີ່ ນໍາເຂົ້າ, ຈໍາໜ່າຍ, ນໍາໃຊ້ ແລະ ໃຫ້ບໍລິການ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຢູ່ພາຍໃນຂອບເຂດແຂວງຕົນ;
8. ສະເໜີແຕ່ງຕັ້ງ, ຍົກຍ້າຍ, ເລື່ອນຊັ້ນ-ຂັ້ນເງິນເດືອນ, ຍ້ອງຍໍ, ປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
9. ຈັດສັນ, ອະນຸມັດການຕິດຕັ້ງ ແລະ ວາງເຄື່ອຂ່າຍໂຄງລ່າງທາງດ້ານເຕັກໂນໂລຊີ ແລະ ການສື່ສານພາຍໃນແຂວງຈໍາປາສັກ ຕາມການມອບໝາຍຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
10. ຮຽກປະຊຸມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ປຶກສາຫາລືກ່ຽວກັບວຽກງານ ເຕັກໂນໂລຊີ ແລະ ການສື່ສານ; ເຂົ້າຮ່ວມກອງປະຊຸມຕ່າງໆ ດ້ານວິຊາການ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຫັນດີຂອງ ກະຊວງ, ແຂວງຈໍາປາສັກ;
11. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອໄກ່ເກ່ຍ ແລະ ແກ້ໄຂຂໍ້ຂັດແຍ່ງ ໃນເມື່ອມີການສະເໜີ ຫຼື ຮ້ອງຟ້ອງ;
12. ພົວພັນຮ່ວມມືດ້ານວຽກງານເຕັກໂນໂລຊີ ແລະ ການສື່ສານ ແລະ ຄວາມປອດໄພໄຊເບີ ກັບຕ່າງປະເທດ ຕາມການຕົກລົງເຫັນດີຂອງກະຊວງ ແລະ ອົງການປົກຄອງແຂວງຈໍາປາສັກ;
13. ພົວພັນ ແລະ ປະສານສົມທົບກັບ ຂະແໜງການອື່ນໆທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຂອງພະແນກ ແລະ ປະກອບຄໍາເຫັນ, ໃຫ້ຄໍາປຶກສາ, ແກ້ໄຂບັນຫາ ທາງດ້ານເຕັກໂນໂລຊີ ແລະ ການສື່ສານ ເພື່ອໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຈໍາປາສັກ;
14. ເລືອກເຟັ້ນເອົາຜົນສໍາເລັດດ້ານ ເຕັກໂນໂລຊີ ແລະ ການສື່ສານ ທີ່ເໝາະສົມຈາກຂົງເຂດຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສະເໜີ ແລະ ພິຈາລະນານໍາໃຊ້ ພາຍໃນແຂວງຈໍາປາສັກ;
15. ຄຸ້ມຄອງ, ນໍາໃຊ້ຊັບສິນ ແລະ ງົບປະມານ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງຈໍາປາສັກ ຕາມການອະນຸມັດຂອງແຂວງຈໍາປາສັກ;
16. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງກະຊວງ ແລະ ອົງການປົກຄອງແຂວງຈໍາປາສັກ ຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກການຈັດຕັ້ງ

ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຈໍາປາສັກ ປະກອບມີກົງຈັກ ດັ່ງນີ້:

1. ຂະແໜງ ບໍລິຫານ, ຈັດຕັ້ງ ແລະ ກວດກາ;
2. ຂະແໜງ ໄປສະນີ ແລະ ການສື່ສານ;
3. ຂະແໜງ ບໍລິຫານລັດດີຈີຕ້ອນ;
4. ຂະແໜງ ຄວາມປອດໄພໄຊເບີ;
5. ຂະແໜງ ເຕັກໂນໂລຊີ ແລະ ນະວັດຕະກໍາ.

ມາດຕາ 6 ໂຄງປະກອບບຸກຄະລາກອນ

ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຈຳປາສັກ ປະກອບມີບຸກຄະລາກອນ ດັ່ງນີ້:

1. ຫົວໜ້າພະແນກ 01 ທ່ານ, ເປັນຜູ້ຮັບຜິດຊອບຕໍ່ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ເຈົ້າແຂວງ, ກ່ຽວກັບຜົນສຳເລັດ, ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງ ແລະ ການເຄື່ອນໄຫວ ວຽກງານຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ.

   ໃນກໍລະນີຕິດຂັດ ຫົວໜ້າພະແນກ ຕ້ອງມອບສິດໃຫ້ ຮອງຫົວໜ້າພະແນກ ທ່ານໃດທ່ານໜຶ່ງ ເປັນຜູ້ຮັກສາການແທນ ຢ່າງເປັນລາຍລັກອັກສອນ.

2. ຮອງຫົວໜ້າພະແນກຈຳນວນໜຶ່ງ, ເປັນຜູ້ຊ່ວຍວຽກຫົວໜ້າພະແນກ ໃນການຊີ້ນຳຂົງເຂດວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ, ຮັບຜິດຊອບຕໍ່ຫົວໜ້າພະແນກ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງຂອງຂົງເຂດວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າພະແນກຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະທີ່ຕົນຮັກສາການແທນນັ້ນ ໃຫ້ຫົວໜ້າພະແນກພາຍຫຼັງກັບມາປະຈຳການ.

3. ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມລະບຽບການ ແລະ ກົດໝາຍກຳນົດໄວ້.

## ໝວດທີ 4
## ໜ້າທີ່ຂອງບັນດາຂະແໜງ

**ມາດຕາ 7 ໜ້າທີ່ຂອງຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ**

ຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ແຜນຍຸດທະສາດ ແລະ ແຜນການແຕ່ລະໄລຍະ ຂອງແຂວງຈຳປາສັກ ແລະ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເພື່ອຫັນເປັນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານ;
2. ຮັບຜິດຊອບວຽກງານບໍລິຫານລວມຂອງພະແນກ, ເປັນໃຈກາງໃນການພົວພັນ, ປະສານກັບພາກສ່ວນທີ່ກ່ຽວຂ້ອງ, ອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານຂອງຄະນະນຳພະແນກ, ຈັດກອງປະຊຸມພາຍໃນພະແນກ, ພິທີການ, ຮັບແຂກຂອງພະແນກ, ບັນທຶກເອກະສານຂາເຂົ້າ-ຂາອອກ, ບັນທຶກກອງປະຊຸມ, ຄຸ້ມຄອງຕາປະທັບ, ຮ່າງເອກະສານທາງລັດຖະການ, ວຽກຂໍ້ມູນຂ່າວສານ ແລະ ປະຊາສຳພັນຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ;
3. ຄຸ້ມຄອງ ແລະ ຂຶ້ນແຜນກໍ່ສ້າງ, ສ້ອມແປງບຳລຸງຮັກສາຕຶກອາຄານ, ພາຫະນະ, ຊັບສິນ, ປະມູນ, ຈັດຊື້, ເບີກຈ່າຍອຸປະກອນຮັບໃຊ້ພາຍໃນພະແນກ;
4. ຂຶ້ນແຜນການໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ໃນການພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ສອດຄ່ອງກັບແຜນການຂອງແຂວງຈຳປາສັກ, ຂອງກະຊວງ ແລະ ສະຫຼຸບແຜນການ

ພັດທະນາຂະແໜງການ ແລະ ວຽກງານຮອບດ້ານປະຈຳອາທິດ, ເດືອນ, ງວດ, 6 ເດືອນ ແລະ ປີ ເພື່ອລາຍງານກະຊວງ ແລະ ອົງການປົກຄອງແຂວງຈຳປາສັກ;

5. ຄົ້ນຄວ້າ, ສ້າງ ແລະ ນຳສະເໜີແຜນງົບປະມານການລົງທຶນຂອງລັດ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ;
6. ຊຸກຍູ້, ແນະນຳ, ຕິດຕາມ ແລະ ປະເມີນຜົນການປັບປຸງກົງຈັກການຈັດຕັ້ງ, ຂຶ້ນແຜນກຳນົດພະນັກງານ ນຳພາ-ຄຸ້ມຄອງໃນແຕ່ລະໄລຍະ, ກໍ່ສ້າງພະນັກງານ, ສັບຊ້ອນ, ຈັດວາງບຸກຄະລາກອນໃຫ້ແທດເໝາະ ກັບຄວາມຮູ້ຄວາມສາມາດ ແລະ ຕຳແໜ່ງງານທີ່ກຳນົດໄວ້ ເພື່ອນຳສະເໜີຄະນະພະແນກພິຈາລະນາ;
7. ສັງລວມ, ບັນຊີ ຈຳນວນພົນ, ເງິນເດືອນ, ເງິນອຸດໜູນຕ່າງໆ ຂອງພະນັກງານ - ລັດຖະກອນ, ສະຖິຕິພະນັກງານ ແລະ ສະເໜີການປະຕິບັດນະໂຍບາຍຕ່າງໆ, ເລື່ອນຊັ້ນ-ຂັ້ນເງິນເດືອນ ຕໍ່ພະນັກງານ-ລັດຖະກອນ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ, ຜູ້ທີ່ມີຜົນງານດີເດັ່ນ ແລະ ສະເໜີປະຕິບັດວິໄນຕໍ່ຜູ້ກະທຳຜິດ;
8. ຊຸກຍູ້, ຕິດຕາມ ແລະ ກວດກາການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ສິດໜ້າທີ່, ຄວາມຮັບຜິດຊອບຕໍ່ການຈັດຕັ້ງ, ລັດຖະກອນພາຍໃນພະແນກການຂອງຕົນ ແລະ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ປະຈຳເມືອງຕາມສາຍຕັ້ງ;
9. ສັງລວມ ແລະ ເກັບກຳຂໍ້ມູນສະຖິຕິ ບັນດາຜູ້ໃຫ້ບໍລິການດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ພາຍໃນແຂວງ ເພື່ອລາຍງານໃຫ້ອົງການປົກຄອງແຂວງຈຳປາສັກ ແລະ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
10. ຄິດໄລ່ເງິນເດືອນ, ເງິນອຸດໜູນຕ່າງໆໃຫ້ແກ່ພະນັກງານພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ ແລະ ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ, ພ້ອມທັງປະຕິບັດການເບີກຖອນ ແລະ ໂອນບັ້ວງເງິນຕ່າງໆ ຈາກຄັງເງິນງົບປະມານຂອງແຂວງຈຳປາສັກ;
11. ເກັບຄ່າທຳນຽມ, ຄ່າບໍລິການດ້ານເຕັກໂນໂລຊີ ແລະ ການສື່ສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມລະບຽບກົດໝາຍກຳນົດໄວ້;
12. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະພະແນກ.

**ມາດຕາ 8 ໜ້າທີ່ຂອງຂະແໜງໄປສະນີ ແລະ ການສື່ສານ**

ຂະແໜງໄປສະນີ ແລະ ການສື່ສານ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນງານ, ໂຄງການ, ລະບຽບ, ກົດໝາຍ, ມະຕິຄຳສັ່ງ, ແຈ້ງການ, ຄຳແນະນຳ, ນິຕິກຳຕ່າງໆຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ແຂວງຈຳປາສັກ ກ່ຽວກັບວຽກງານໄປສະນີ ແລະ ການສື່ສານ;
2. ໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳຕ່າງໆ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງກັບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ;
3. ຄົ້ນຄວ້າຄຳສະເໜີ, ຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງ ກ່ຽວກັບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອນຳສະເໜີຂັ້ນເທິງພິຈາລະນາແກ້ໄຂ;

4. ຄຸ້ມຄອງ, ຕິດຕາມ, ກວດກາ ບຸກຄົນ, ນິຕິບຸກຄົນ, ບັນດາຫົວໜ່ວຍທຸລະກິດ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ ແລະ ບໍລິການດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃຫ້ປະຕິບັດຖືກຕ້ອງຕາມລະບຽບ ແລະ ກົດໝາຍ, ພ້ອມທັງສັງລວມຂໍ້ມູນຫຼັກຖານຂອງ ການລະເມີດ ເພື່ອລາຍງານແຂວງ ແລະ ກະຊວງຮັບຊາບ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂ, ໃຫ້ຄຳແນະນຳ ແລະ ໃຊ້ມາດຕະການຜູ້ ລະເມີດຕໍ່ລະບຽບ ແລະ ກົດໝາຍ;
6. ຄຸ້ມຄອງ ແລະ ຕິດຕາມ, ກວດກາ ການສ້າງ, ການຕິດຕັ້ງ, ການຮື້ຖອນ, ການນຳໃຊ້ພື້ນຖານໂຄງ ລ່າງໂທລະຄົມມະນາຄົມ;
7. ຄຸ້ມຄອງ ແລະ ກວດກາມາດຕະຖານເຕັກນິກ ການນຳເຂົ້າ-ສົ່ງອອກ, ນຳໃຊ້ອຸປະກອນໂທລະຄົມ ມະນາຄົມ ແລະ ການສື່ສານ ໃນຄວາມຮັບຜິດຊອບຂອງຕົນ;
8. ຄົ້ນຄວ້າ, ນຳສະເໜີ ອອກໃບອະນຸຍາດ, ສືບຕໍ່, ໂຈະ, ຍົກເລີກ ຫຼື ຖອນໃບອະນຸຍາດການດຳເນີນ ທຸລະກິດດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຕາມການມອບໝາຍຂອງກະຊວງ ໃນແຕ່ລະໄລຍະ;
9. ຊຸກຍູ້, ສົ່ງເສີມ ແລະ ພັດທະນາການບໍລິການດ້ານໄປສະນີ ທັນເປັນທັນສະໄໝ ດ້ວຍລະບົບເອເລັກ ໂຕຣນິກ ແລະ ໂລຈິສຕິກ, ອຳນວຍຄວາມສະດວກໃຫ້ຫົວໜ່ວຍທຸລະກິດ ທີ່ໃຫ້ບໍລິການດ້ານ ໄປສະນີໃນການຂະຫຍາຍຕາໜ່າງໄປສະນີ ແລະ ການຂະຫຍາຍພື້ນຖານໂຄງລ່າງໂທລະຄົມມະນາຄົມ ອອກສູ່ຊົນນະບົດ, ຈຸດສຸມພັດທະນາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
10. ສຳຫຼວດ ແລະ ເກັບກຳສະພາບການແຂ່ງຂັນ ແລະ ການເໜັງຕີງຂອງຕະຫຼາດໄປສະນີ, ໂທລະຄົມ ມະນາຄົມ ແລະ ຄວາມເພິ່ງພໍໃຈຂອງຜູ້ໃຊ້ບໍລິການ ເພື່ອສະກັດກັ້ນການແຂ່ງຂັນທີ່ບໍ່ເປັນທຳ ຢູ່ ພາຍໃນແຂວງ;
11. ສ້າງຖານຂໍ້ມູນ ແລະ ເກັບກຳສະຖິຕິວຽກງານດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
12. ຕິດຕາມ, ກວດກາ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງສະຖານີຄື້ນຄວາມຖີ່ວິທະຍຸສື່ສານ, ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ແລະ ການສະເໜີຂອງຜູ້ໄດ້ຮັບຜົນກະທົບຈາກການນຳໃຊ້ຄື້ນ ຄວາມຖີ່ທັງພາຍໃນ ແລະ ຕ່າງປະເທດ;
13. ຄຸ້ມຄອງ, ຕິດຕາມ, ກວດກາ, ອອກໃບຢັ້ງຢືນ ມາດຕະຖານເຕັກນິກ ແລະ ຄຸນນະພາບ ການບໍລິການ ດ້ານໄປສະນີ ແລະ ການສື່ສານ ຕາມການມອບໝາຍຂອງກະຊວງໃນແຕ່ລະໄລຍະ;
14. ວິເຄາະ, ສະຫຼຸບຮອບດ້ານສະພາບການເຄື່ອນໄຫວດຳເນີນທຸລະກິດຂອງ ສາຂາບໍລິສັດ ລັດວິສາຫະກິດ ໄປສະນີລາວ ແລະ ບັນດາຫົວໜ່ວຍທຸລະກິດທີ່ໃຫ້ບໍລິການໄປສະນີທີ່ຂຶ້ນກັບຕົນໃຫ້ກະຊວງ ຮັບຊາບ ຢ່າງເປັນປົກກະຕິ;
15. ສະຫຼຸບ ແລະ ຂຶ້ນແຜນການເຄື່ອນໄຫວວຽກງານຂອງຂະແໜງຕົນ ປະຈຳອາທິດ, ເດືອນ, ງວດ ແລະ ປີ;
16. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະພະແນກ.

ມາດຕາ 9 ໜ້າທີ່ຂອງຂະແໜງບໍລິຫານລັດດີຈິຕ້ອນ

ຂະແໜງບໍລິຫານລັດດີຈິຕ້ອນ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນງານ, ໂຄງການ, ລະບຽບ, ກົດໝາຍ, ມະຕິຄຳສັ່ງ, ແຈ້ງການ, ຄຳແນະນຳ, ນິຕິກຳຕ່າງໆຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ແຂວງຈຳປາສັກ ກ່ຽວກັບວຽກງານບໍລິຫານລັດດີຈິຕ້ອນ;

2. ໂຄສະນາ, ເຜີຍແຜ່ວິໄສທັດ, ແຜນຍຸດທະສາດ, ແຜນພັດທະນາວຽກງານລັດຖະບານດີຈີຕ້ອນ, ແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ;
3. ຊຸກຍູ້, ສົ່ງເສີມ, ວຽກງານບໍລິການດີຈີຕ້ອນ, ລະບົບປະຕູຂໍ້ມູນຂ່າວສານ ແລະ ວຽກງານບໍລິຫານລັດດີຈີຕ້ອນ, ນໍາພາບັນດາຫ້ອງການລັດ ແລະ ຂະແໜງການຕ່າງໆ ໃຫ້ນໍາໃຊ້ບໍລິການລະບົບບໍລິຫານ ລັດດີຈີຕ້ອນ, ການນໍາໃຊ້ນະວັດຕະກໍາໃໝ່ຂອງເຕັກໂນໂລຊີພາສາລາວ ຢ່າງກວ້າງຂວາງ;
4. ໂຄສະນາ, ເຜີຍແຜ່, ຈັດຝຶກອົບຮົມ, ສໍາມະນາ, ສ້າງກິດຈະກໍາ, ຍົກລະດັບພະນັກງານທັງພາກລັດ ແລະ ເອກະຊົນ ໃຫ້ສາມາດຄຸ້ມຄອງ, ນໍາໃຊ້ ແລະ ບໍລິການລະບົບບໍລິຫານລັດດີຈີຕ້ອນ ເພື່ອຮອງຮັບໃຫ້ແກ່ການຫັນເປັນທັນສະໄໝ;
5. ຄົ້ນຄວ້າ, ຄຸ້ມຄອງລະບົບບໍລິການພາກລັດ ທີ່ຮັບໃຊ້ວຽກງານການເຊື່ອມຕໍ່, ການເກັບຮັກສາຂໍ້ມູນ, ການຢັ້ງຢືນຄວາມປອດໄພ ຂອງລະບົບບໍລິຫານລັດ ແລະ ບໍລິການແບບດີຈີຕ້ອນ;
6. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການພັດທະນາຫຼັກສູດ, ຄູ່ມືການຝຶກອົບຮົມໃຫ້ຄວາມຮູ້ດ້ານບໍລິຫານລັດດີຈີຕ້ອນ;
7. ຄຸ້ມຄອງ, ສົ່ງເສີມ ແລະ ໃຫ້ບໍລິການ ລະບົບບໍລິຫານລັດດີຈີຕ້ອນ ນໍາໃຊ້ເຂົ້າໃນວຽກງານບໍລິຫານລັດ (G2G) ຂອງແຕ່ລະຂະແໜງການ ພາຍໃນແຂວງຈໍາປາສັກ ເປັນຕົ້ນ ຫ້ອງການລັດທັນສະໄໝ (e-office), E-signature, Email, VDO Conference, G-Web, G-Chat, G-Share, LoudChat ແລະ ອື່ນໆ;
8. ປະສານງານຮ່ວມມືກັບອົງການຈັດຕັ້ງ, ອົງການຈັດຕັ້ງສາກົນ, ພາກທຸລະກິດ ແລະ ປະຊາຊົນເພື່ອເຊື່ອມໂຍງລະບົບຖານຂໍ້ມູນ ແລະ ໂປຣແກຣມຕ່າງໆ ເຂົ້າໃນພື້ນຖານໂຄງລ່າງຂອງລະບົບບໍລິຫານລັດດີຈີຕ້ອນ;
9. ຄົ້ນຄວ້າ, ສ້າງ ແລະ ຜັນຂະຫຍາຍນິຕິກໍາລຸ່ມກົດໝາຍ ທີ່ກ່ຽວຂ້ອງກັບວຽກບໍລິຫານລັດດີຈີຕ້ອນ ພ້ອມທັງສັງລວມ ເກັບກໍາບັນດາກົດໝາຍ, ດໍາລັດ, ສົນທິສັນຍາ, ນະໂຍບາຍ, ຂໍ້ຕົກລົງ ຄໍາແນະນໍາ ກົດລະບຽບ ແລະ ນິຕິກໍາຕ່າງໆຂອງຂັ້ນເທິງ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ແຂວງຈໍາປາສັກ ກໍານົດອອກແຕ່ລະໄລຍະ;
10. ເກັບກໍາ ແລະ ສັງລວມສະຖິຕິຕ່າງໆ ກ່ຽວກັບການບໍລິຫານລັດ ແລະ ບໍລິການແບບດີຈີຕ້ອນ;
11. ສະຫຼຸບ ແລະ ຂຶ້ນແຜນການເຄື່ອນໄຫວວຽກງານຂອງຂະແໜງ ປະຈໍາອາທິດ, ເດືອນ, ງວດ ແລະ ປີ;
12. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະພະແນກ.

ມາດຕາ 10 ໜ້າທີ່ຂອງຂະແໜງຄວາມປອດໄພໄຊເບີ

ຂະແໜງຄວາມປອດໄພໄຊເບີ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນງານ, ໂຄງການ, ລະບຽບ, ກົດໝາຍ, ມະຕິຄໍາສັ່ງ, ແຈ້ງການ, ຄໍາແນະນໍາ, ນິຕິກໍາຕ່າງໆຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ແຂວງຈໍາປາສັກ ກ່ຽວກັບວຽກງານຄວາມປອດໄພໄຊເບີ;
2. ຄົ້ນຄວ້າ, ສ້າງ ແລະ ຜັນຂະຫຍາຍນິຕິກໍາລຸ່ມກົດໝາຍ ທີ່ກ່ຽວຂ້ອງກັບວຽກຄວາມປອດໄພໄຊເບີ, ມາດຕະການຕອບໂຕ້ເຫດສຸກເສີນ ທາງລະບົບຄອມພິວເຕີ ແລະ ມາດຕະການຮັກສາຄວາມປອດ

ໄພໄຊເບີ ພ້ອມທັງສັງລວມ ເກັບກຳບັນດາກົດໝາຍ, ດຳລັດ, ສົນທິສັນຍາ, ນະໂຍບາຍ, ຂໍ້ຕົກລົງ, ຄຳແນະນຳ, ກົດລະບຽບ ແລະ ນິຕິກຳຕ່າງໆຂອງຂັ້ນເທິງ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ແຂວງຈຳປາສັກ ກຳນົດອອກແຕ່ລະໄລຍະ;

3. ໂຄສະນາ, ເຜີຍແຜ່, ຈັດຝຶກອົບຮົມ, ສຳມະນາ, ສ້າງກິດຈະກຳ, ຍົກລະດັບພະນັກງານທັງພາກລັດ ແລະ ເອກະຊົນ; ພ້ອມທັງໃຫ້ຄຳປຶກສາ ທາງດ້ານເຕັກນິກວິຊາການ ກ່ຽວກັບວຽກງານຄວາມປອດໄພໄຊເບີ ແລະ ການປົກປ້ອງຜູ້ຊົມໃຊ້ໃນການນຳໃຊ້ອິນເຕີເນັດ;
4. ຄຸ້ມຄອງ, ສ້າງ ແລະ ປັບປຸງເວັບໄຊ໌ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແລະ ຄົ້ນຄວ້າສ້າງປຶ້ມຄູ່ມື ໃນການນຳໃຊ້ຄອມພິວເຕີ ໃຫ້ມີຄວາມປອດໄພ ພ້ອມທັງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການສ້າງ ແລະ ພັດທະນາຫຼັກສູດຝຶກອົບຮົມ ໃຫ້ຄວາມຮູ້ດ້ານຄວາມປອດໄພໄຊເບີ ແລະ ການປົກປ້ອງຜູ້ຊົມໃຊ້ໃນການນຳໃຊ້ອິນເຕີເນັດ;
5. ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະການຄຸ້ມຄອງອິນເຕີເນັດ;
6. ຄົ້ນຄວ້າ, ນຳສະເໜີຂໍການຢັ້ງຢືນຂໍ້ມູນຫຼັກຖານການກະທຳຜິດ ຜ່ານອິນເຕີເນັດ ຕາມການສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄປຍັງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ສະໜອງຂໍ້ມູນຫຼັກຖານ ການກະທຳຜິດທາງໄຊເບີ ໃຫ້ເຈົ້າໜ້າທີ່ຕຳຫຼວດ ແລະ ພາກສ່ວນທີ່ກ່ຽວຂ້ອງ;
7. ໃຫ້ຄຳປຶກສາ, ແນະນຳດ້ານເຕັກນິກ ແລະ ວິທີການແກ້ໄຂບັນຫາ ແກ່ພາກສ່ວນກ່ຽວຂ້ອງ ຫຼື ຜູ້ຖືກເສຍຫາຍຜ່ານອິນເຕີເນັດ ໃນການຕອບໂຕ້ບັນດາຂ່າວທີ່ເປັນຫາງສຽງບໍ່ດີໃນສັງຄົມ, ຂ່າວປອມ, ຂ່າວບິດເບືອນຄວາມຈິງ ແລະ ການສົ່ງຕໍ່ຂໍ້ມູນຂ່າວທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ;
8. ຕິດຕາມ ແລະ ຮັບແຈ້ງເຫດ, ແຈ້ງເຕືອນ ແລະ ດຳເນີນການແກ້ໄຂ ກ່ຽວກັບໄພຄຸກຄາມທາງໄຊເບີ;
9. ເກັບກຳ ແລະ ສັງລວມສະຖິຕິຕ່າງໆ ກ່ຽວກັບເຫດສຸກເສີນທາງລະບົບຄອມພິວເຕີ ແລະ ຄວາມປອດໄພໄຊເບີ;
10. ປະສານສົມທົບ, ຕິດຕາມ, ກວດກາ, ສະຫຼຸບສັງລວມ ແລະ ຂຶ້ນແຜນການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແຂວງຈຳປາສັກ;
11. ສະຫຼຸບ ແລະ ຂຶ້ນແຜນການເຄື່ອນໄຫວວຽກງານຂອງຂະແໜງ ປະຈຳອາທິດ, ເດືອນ, ງວດ ແລະ ປີ;
12. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະພະແນກ.

**ມາດຕາ 11 ໜ້າທີ່ຂອງຂະແໜງເຕັກໂນໂລຊີ ແລະ ນະວັດຕະກຳ**

ຂະແໜງເຕັກໂນໂລຊີ ແລະ ນະວັດຕະກຳ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນງານ, ໂຄງການ, ລະບຽບ, ກົດໝາຍ, ມະຕິຄຳສັ່ງ, ແຈ້ງການ, ຄຳແນະນຳ, ນິຕິກຳຕ່າງໆຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ແຂວງຈຳປາສັກ ກ່ຽວກັບວຽກງານເຕັກໂນໂລຊີດີຈິຕ໋ອນ, ນະວັດຕະກຳ ແລະ ການພັດທະນາເສດຖະກິດດີຈິຕ໋ອນ;
2. ໂຄສະນາ, ເຜີຍແຜ່ວິໄສທັດ, ແຜນຍຸດທະສາດ, ແຜນພັດທະນາວຽກງານເສດຖະກິດດີຈິຕ໋ອນ, ແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານ ເຕັກໂນໂລຊີດີຈິຕ໋ອນ, ນະວັດຕະກຳ, ສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ ໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈ;

3. ຊຸກຍູ້, ສົ່ງເສີມ, ຈັດຝຶກອົບຮົມ, ສໍາມະນາ, ຍົກລະດັບ ແລະ ພັດທະນາວິຊາການດ້ານເຕັກໂນໂລຊີດີຈີຕ້ອນ, ນະວັດຕະກໍາ ແລະ ຖ່າຍທອດເຕັກໂນໂລຊີ ໃຫ້ທຸກຂະແໜງການທັງພາກລັດ ແລະ ເອກະຊົນ ແນໃສ່ເພື່ອຍົກສູງຄຸນນະພາບຂອງການສຶກສາ, ການຜະລິດ, ການຄ້າ, ການບໍລິການ ແລະ ການດໍາລົງຊີວິດ ຮັບຮອງໃຫ້ແກ່ການພັດທະນາເສດຖະກິດດີຈີຕ້ອນ;
4. ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ກວດກາ ວຽກງານເຕັກໂນໂລຊີດີຈີຕ້ອນ, ນະວັດຕະກໍາ ແລະ ການຖ່າຍທອດເຕັກໂນໂລຊີ;
5. ສັງລວມ, ເກັບກໍາຂໍ້ມູນດ້ານເຕັກໂນໂລຊີ ແລະ ນະວັດຕະກໍາ ຜະລິດຕະພັນທີ່ເປັນທ່າແຮງທ້ອງຖິ່ນ, ຂໍ້ມູນຄວາມຕ້ອງການນໍາໃຊ້, ພັດທະນາເຕັກໂນໂລຊີ ແລະ ນະວັດຕະກໍາ;
6. ຄົ້ນຄວ້າ, ນໍາສະເໜີ ອອກໃບອະນຸຍາດ, ສືບຕໍ່, ໂຈະ, ຍົກເລີກ ຫຼື ຖອນໃບອະນຸຍາດການດໍາເນີນທຸລະກິດດ້ານເຕັກໂນໂລຊີດີຈີຕ້ອນ, ນະວັດຕະກໍາ ແລະ ທຸລະກໍາທາງເອເລັກໂຕຣນິກ ຕາມການມອບໝາຍຂອງກະຊວງ ໃນແຕ່ລະໄລຍະ;
7. ຕິດຕາມ, ກວດກາ, ສໍາຫຼວດເກັບກໍາສະຖິຕິ ບັນດາຫົວໜ່ວຍທຸລະກິດດ້ານເຕັກໂນໂລຊີດີຈີຕ້ອນ, ນະວັດຕະກໍາ ການຖ່າຍທອດເຕັກໂນໂລຊີ ແລະ ເຂດເຕັກໂນໂລຊີລະດັບສູງ, ເຂດທົດລອງເຕັກໂນໂລຊີໃໝ່ ແລະ ເຕັກໂນໂລຊີກ້າວໜ້າ;
8. ພົວພັນ, ຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການຊອກຫາແຫຼ່ງທຶນ ໃຫ້ຜູ້ປະກອບການທີ່ນໍາໃຊ້ເຕັກໂນໂລຊີ ເຂົ້າໃນທຸລະກິດລິເລີ່ມ (Startup);
9. ສ້າງກິດຈະກໍາ, ຈັດການແຂ່ງຂັນ, ການປະກວດ ແລະ ນໍາສະເໜີແນວຄວາມຄິດຂອງນັກຮຽນ, ນັກສຶກສາ ແລະ ໄວໜຸ່ມ ໃຫ້ເປັນພື້ນຖານໃນການສ້າງ ແລະ ນໍາໃຊ້ເຕັກໂນໂລຊີ ເຂົ້າໃນການແກ້ໄຂບັນຫາເພື່ອສ້າງທຸລະກິດລິເລີ່ມ;
10. ສະຫຼຸບ ແລະ ຂຶ້ນແຜນການເຄື່ອນໄຫວວຽກງານຂອງຂະແໜງຕົນ ປະຈໍາອາທິດ, ເດືອນ, ງວດ ແລະ ປີ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະພະແນກ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 12 ຫຼັກການ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈໍາປາສັກ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງພະແນກ, ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບ ຂອງບຸກຄົນ;
2. ປະຕິບັດລະບອບຫົວໜ້າດຽວ, ຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນ;

3. ທຸກການເຄື່ອນໄຫວຂອງວຽກງານ ແມ່ນອີງໃສ່ແນວທາງນະໂຍບາຍຂອງພັກ, ລັດ, ກົດໝາຍ ແລະ ລະບຽບການ.

**ມາດຕາ 13 ແບບແຜນວິທີເຮັດວຽກ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ ຈຳປາສັກ ມີແບບແຜນ ແລະ ວິທີເຮັດວຽກ ດັ່ງນີ້:

1. ທຸກການເຄື່ອນໄຫວວຽກງານ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ ຈຳປາສັກ ແມ່ນອີງໃສ່ຫຼັກການ ແລະ ລະບຽບການຂອງແຂວງ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ;
3. ມີການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ, ແກ້ໄຂຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
4. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້, ຕິດຕາມ ແລະ ກວດກາ, ເກັບກຳສະພາບລວມ ແລະ ສະເພາະດ້ານ ຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ ເຈົ້າແຂວງ ແລະ ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 14 ງົບປະມານ, ຕາປະທັບ ແລະ ເຄື່ອງແບບ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ ມີງົບປະມານ, ຕາປະທັບ ແລະ ເຄື່ອງແບບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 15 ການຈັດຕັ້ງປະຕິບັດ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງຈຳປາສັກ, ບັນດາພະແນກການ, ອົງການທຽບເທົ່າ ຂັ້ນແຂວງ, ນະຄອນ, ບັນດາເມືອງໃນທົ່ວແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການ **ເຈົ້າແຂວງ**

ສົມບູນ ເຮືອງວົງສາ